DEPARTMENT OF HEALTH

# ຂໍ້ຄວາມ ຄໍາຖາມທີ່ມັກຖາມເລື້ອຍໆວ່າວັກຊີນໂຄວິດ-19 ສ້າງຂຶ້ນໄດ້ແນວໃດ

ທ່ານອາດຈະໄດ້ຍິນຂໍ້ມູນຫຼາຍຢ່າງກ່ຽວກັບວັກຊີນໂຄວິດ-19 ໃນປັດຈຸບັນນີ້. ພວກເຮົາຕ້ອງການຕອບຄໍາຖາມທົ່ວໄປຈໍານວນໜຶ່ງກ່ຽວກັບວິທີການສ້າງວັກຊີນໂຄວິດ-19.

## ວັກຊີນໂຄວິດ-19 ຜະລິດໄດ້ໄວກວ່າໄດ້ແນວໃດ?

ໂດຍທົ່ວໄປແລ້ວ, ການທົດລອງວັກຊີນ ເພື່ອໃຫ້ແນ່ໃຈວ່າ ມັນປອດໄພ ແລະ ມີປະສິດທິຜົນ ກ່ອນຈະຜະລິດວັກຊີນ ຈໍານວນຫຼາຍ. ຍ້ອນການລະບາດຂອງພະຍາດ ແລະ ການສະໜັບສະໜູນດ້ານການເງິນຂອງລັດຖະບານກາງ, ນັກວິທະຍາສາດໄດ້ເຮັດທັງສອງຢ່າງໃນເວລາດຽວກັນ. ມີພຽງແຕ່ວັກຊີນທີ່ໄດ້ຮັບການທົດລອງ ແລະ ສະແດງໃຫ້ເຫັນວ່າພວກມັນ ປອດໄພເທົ່ານັ້ນທີ່ເອົາມາໃຊ້.

## ວັກຊີນໂຄວິດ-19 ໄດ້ຮັບການທົດລອງແນວໃດ?

ທຸກວັກຊີນໂຄວິດ-19 ໄດ້ຜ່ານການທົດລອງຫຼາຍຄັ້ງ ທີ່ເອີ້ນວ່າ ການທົດລອງທາງດ້ານການແພດ. ວັກຊີນແຕ່ລະອັນໄດ້ຜ່ານການທົດລອງຫຼາຍກວ່າໜຶ່ງຄັ້ງ. ກ່ອນອື່ນໝົດ, ວັກຊີນໄດ້ຮັບການທົດລອງກັບຈໍານວນອາສາສະໝັກກຸ່ມນ້ອຍ, ຈາກນັ້ນເພີ່ມຂຶ້ນເປັນສອງສາມຮ້ອຍ, ຈາກນັ້ນ ຈຶ່ງເພີ່ມຂຶ້ນເປັນຫຼາຍພັນຄົນ. ອາສາສະໝັກທີ່ເຂົ້າຮັບການທົດລອງ ວັກຊີນໂຄວິດ-19 ແມ່ນມາຈາກຫຼາກຫຼາຍຊຸມຊົນ ແລະ ເຊື້ອຊາດ. ນີ້ແມ່ນຂະບວນການດຽວກັນທີ່ໃຊ້ສໍາລັບການ ທົດລອງວັກຊີນອື່ນໆ.

## ວັກຊີນໂຄວິດ-19 ໄດ້ຮັບການຮັບຮອງໄດ້ແນວໃດ?

ສໍາລັບວັກຊີນທີ່ໄດ້ຜ່ານທຸກການທົດລອງ, ທີມຊ່ຽວຊານທາງການແພດ ຈະເບິ່ງຜົນໄດ້ຮັບຈາກການທົດລອງ ແລະເບິ່ງວ່າຄົນຮູ້ສຶກແນວໃດຫຼັງຈາກໄດ້ຮັບວັກຊີນ. ຖ້າວັກຊີນໄດ້ຮັບຜົນດີ ແລະ ປອດໄພ, ມັນຈຶ່ງຈະຖືກຮັບຮອງ. ມີຫຼາກຫຼາຍກຸ່ມຂອງນັກວິທະຍາສາດ ແລະ ຊ່ຽວຊານ ທີ່ກໍາລັງທົບທວນຂໍ້ມູນຄວາມປອດໄພຂອງວັກຊີນໂຄວິດ-19 ແລະ ໃຫ້ຄໍາແນະນໍາ. ມີພຽງແຕ່ວັກຊີນທີ່ຖືກຮັບຮອງເທົ່ານັ້ນ ຈຶ່ງຈະໃຫ້ໃຊ້ກັບຄົນໄດ້.

## ແມ່ນໃຜຄວນໄດ້ຮັບວັກຊີນກ່ອນໝູ່?

ກຸ່ມທີ່ປຶກສາລະດັບຊາດຂອງ CDC ໄດ້ເບິ່ງຂໍ້ມູນ ແລະ ໃຫ້ຄໍາແນະນໍາສໍາລັບຜູ້ທີ່ຄວນຈະໄດ້ຮັບວັກຊີນກ່ອນໝູ່. ມີຄົນບາງກຸ່ມມີຄວາມສ່ຽງສູງສຸດສໍາລັບໂຄວິດ-19 ຫຼື ສາມາດໄດ້ຮັບການເຈັບປ່ວຍຮຸນແຮງຈາກໂຄວິດ-19 ຈະໄດ້ຮັບວັກຊີນ ກ່ອນໝູ່. ມີນີໂຊຕາມີທີມຜູ້ຊ່ຽວຊານທີ່ຈະຊ່ວຍໃຫ້ແນ່ໃຈວ່າວັກຊີນມີໃຫ້ກັບທຸກຄົນຢ່າງຍຸດຕິທໍາ, ຊຶ່ງສຸມໃສ່ຄວາມຍຸດຕິ ທໍາທາງດ້ານສຸຂະພາບ. ເນື່ອງຈາກວ່ານັບມື້ນັບມີວັກຊີນເພີ່ມຂຶ້ນ, ຄົນທີ່ຈະຮັບວັກຊີນຈຶ່ງມີເພີ່ມຂຶ້ນ.

ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບວັກຊີນໂຄວິດ-19 ຈົ່ງເຂົ້າເບິ່ງເວັບໄຊທ໌ຂອງພະແນກສາທາລະນະສຸກ.

Minnesota Department of Health
Communications Office
PO Box 64975
St. Paul, MN 55164-0975
651-201-4989
health.communications@state.mn.us
www.health.state.mn.us

2/9/21 (Lao)

*ຕ້ອງການໄດ້ຮັບຂໍ້ມູນນີ້ເປັນຮູບແບບອື່ນ, ໂທຫາ: 651-201-4989.*